ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 27 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 03 SEP 2021

# ຂໍ້ຕົກລົງ
# ວ່າດ້ວຍການຄອບຄອງກິດຈະການ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0226/ສຄຄຊ, ລົງວັນທີ 20 ສິງຫາ 2021.

### ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄອບຄອງກິດຈະການ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການເຂົ້າມາຄອບຄອງກິດຈະການຂອງບໍລິສັດຈົດທະບຽນ ພ້ອມທັງ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ ແນໃສ່ເຮັດໃຫ້ການດຳເນີນການຄອບຄອງກິດຈະການມີຄວາມ ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ການຄອບຄອງກິດຈະການ**

ການຄອບຄອງກິດຈະການ ແມ່ນການຖືຄອງຮຸ້ນຂອງບໍລິສັດຈົດທະບຽນໃດໜຶ່ງ ທີ່ເຮັດໃຫ້ຜູ້ຖືຄອງຮຸ້ນ ກາຍເປັນຜູ້ຖືຮຸ້ນທີ່ມີອຳນາດປ່ຽນແປງນະໂຍບາຍ ກ່ຽວກັບການດຳເນີນທຸລະກິດ, ບຸກຄະລາກອນ ແລະ ການເງິນຂອງບໍລິສັດຈົດທະບຽນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ສະເໜີຊື້ຮຸ້ນ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ທີ່ສະ ເໜີຊື້ຮຸ້ນ ຂອງບໍລິສັດຈົດທະບຽນ ໃດໜຶ່ງ ດ້ວຍຄວາມສະໝັກໃຈ ຫຼື ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

2. ຜູ້ຂາຍຮຸ້ນ ໝາຍເຖິງ ຜູ້ຖືຄອງຮຸ້ນຂອງ ບໍລິສັດຈົດທະບຽນ ທີ່ຂາຍຮຸ້ນ ໃຫ້ແກ່ຜູ້ສະເໜີຊື້ຮຸ້ນ;

3. ບໍລິສັດຫຼັກຊັບ ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດໃນການດຳເນີນທຸລະກິດຫຼັກຊັບ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ທີ່ປຶກສາການເງິນອິດສະລະ (Independent Financial adviser) ໝາຍເຖິງ ບໍລິສັດຫຼັກຊັບ ຫຼື ບໍລິສັດກວດສອບ ທີ່ໄດ້ຮັບອະນຸຍາດ ຫຼື ຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. ການຖືຄອງຮຸ້ນທີ່ໄດ້ມາຈາກການໂອນຮຸ້ນ ໝາຍເຖິງ ຜູ້ຖືຄອງຮຸ້ນທີ່ໄດ້ຮັບຮຸ້ນຈາກການໂອນຮຸ້ນ ໃນຮູບແບບຕາມສັນຍາ, ການສືບທອດມູນມໍລະດົກ ຫຼື ຕາມການແບ່ງປັນສິນສົມສ້າງ, ຕາມຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ແລະ ຕາມການຮ້ອງຂໍ ຫຼື ຕາມການກຳນົດຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

6. ຜູ້ຄອບຄອງກິດຈະການ ໝາຍເຖິງ ຜູ້ຖືຮຸ້ນທີ່ຖືຄອງຮຸ້ນທາງກົງ ແລະ ທາງອ້ອມ ນັບແຕ່ ສາມສິບສ່ວນຮ້ອຍ (30%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງ;

7. ການປັ່ນຕະຫຼາດ ໝາຍເຖິງ ພຶດຕິກາການສັ່ງຊື້ ແລະ/ຫຼື ສັ່ງຂາຍຮຸ້ນ ໃນລາຄາ ແລະ/ຫຼື ປະລິມານທີ່ສູງ ຫຼື ຕໍ່າ ທີ່ຜິດປົກກະຕິຈາກຄວາມເປັນຈິງ ແລະ ສິ່ງຜົນເສຍຫາຍ ໃຫ້ແກ່ຜູ້ລົງທຶນລາຍອື່ນ;

8. ບໍລິສັດຈົດທະບຽນ ໝາຍເຖິງ ບໍລິສັດທີ່ໄດ້ນຳເອົາຮຸ້ນຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ທີ່ຖືກສະເໜີຊື້ຮຸ້ນ.

### ມາດຕາ 4 ຫຼັກການ

ການຄອບຄອງກິດຈະການ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນ;
2. ເປີດເຜີຍຂໍ້ມູນຢ່າງ ຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ;
3. ໂປ່ງໃສ, ຍຸຕິທຳ ແລະ ເທົ່າທຽມກັນ.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ຜູ້ສະເໜີຊື້ຮຸ້ນ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຄອບຄອງກິດຈະການຂອງບໍລິສັດຈົດທະບຽນ ຢູ່ ຕະຫຼາດຫຼັກຊັບ.

## ໝວດທີ 2
## ວິທີການຄອບຄອງກິດຈະການ

### ມາດຕາ 6 ວິທີການຄອບຄອງກິດຈະການ

ການຄອບຄອງກິດຈະການ ປະກອບມີ 2 ວິທີການ ດັ່ງນີ້:

1. ການຄອບຄອງກິດຈະການໂດຍທາງກົງ;
2. ການຄອບຄອງກິດຈະການໂດຍທາງອ້ອມ.

ການຄອບຄອງກິດຈະການໂດຍທາງກົງ ແມ່ນຜູ້ຖືຮຸ້ນທີ່ຖືຄອງຮຸ້ນທີ່ໄດ້ມາໂດຍຜ່ານການຊື້ຮຸ້ນ ຫຼື ຮັບໂອນຮຸ້ນ;

ການຄອບຄອງກິດຈະການໂດຍທາງອ້ອມ ແມ່ນການຖືຄອງຮຸ້ນຂອງຕົນເອງ ລວມທັງຂອງ ຜົວ, ເມຍ, ລູກ ທີ່ມີອາຍຸຕໍ່າກວ່າ 18 ປີ ໃນບໍລິສັດຈົດທະບຽນ ແລະ ໃນນິຕິບຸກຄົນໃດໜຶ່ງ ຊຶ່ງນິຕິບຸກຄົນດັ່ງກ່າວ ຖືຮຸ້ນຂອງບໍລິສັດຈົດທະບຽນ.

**ມາດຕາ 7 ອັດຕາສ່ວນການຖືຄອງຮຸ້ນທີ່ຕ້ອງດຳເນີນການສະເໜີຊື້ຮຸ້ນ**

ອັດຕາສ່ວນການຖືຄອງຮຸ້ນ ທີ່ຕ້ອງດຳເນີນການສະເໜີຊື້ຮຸ້ນມີ ດັ່ງນີ້:

1. ສາມສິບສ່ວນຮ້ອຍ (30%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງຂອງບໍລິສັດຈົດທະບຽນ;
2. ຫ້າສິບສ່ວນຮ້ອຍ (50%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງຂອງບໍລິສັດຈົດທະບຽນ;
3. ເຈັດສິບສ່ວນຮ້ອຍ (70%) ຂຶ້ນໄປຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງຂອງບໍລິສັດຈົດທະບຽນ.

**ມາດຕາ 8 ຮູບແບບການສະເໜີຊື້ຮຸ້ນ**

ການສະເໜີຊື້ຮຸ້ນ ປະກອບມີ 2 ຮູບແບບ ດັ່ງນີ້:

1. ການສະເໜີຊື້ຮຸ້ນທັງໝົດ (Full Tender offer);
2. ການສະເໜີຊື້ຮຸ້ນບາງສ່ວນ (Partial Tender offer).

**ມາດຕາ 9 ການສະເໜີຊື້ຮຸ້ນທັງໝົດ**

ຜູ້ຖືຮຸ້ນ ທີ່ຊື້ຮຸ້ນ ຫຼື ຮັບໂອນຮຸ້ນ ຂອງບໍລິສັດຈົດທະບຽນ ເຮັດໃຫ້ອັດຕາສ່ວນການຖືຄອງຮຸ້ນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຕ້ອງສະເໜີຊື້ຮຸ້ນທັງໝົດ.

ການຊື້ຮຸ້ນທັງໝົດ ຜູ້ສະເໜີຊື້ຮຸ້ນ ຕ້ອງແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອຊ່ວຍດຳເນີນການແທນຕົນໃນການສະເໜີຊື້ຮຸ້ນດັ່ງກ່າວ.

**ມາດຕາ 10 ການສະເໜີຊື້ຮຸ້ນບາງສ່ວນ**

ການສະເໜີຊື້ຮຸ້ນບາງສ່ວນ ແມ່ນການສະເໜີຊື້ຮຸ້ນ ໂດຍບໍ່ມີຈຸດປະສົງ ຄອບຄອງກິດຈະການ. ການສະເໜີຊື້ຮຸ້ນບາງສ່ວນ ຕ້ອງບໍ່ໃຫ້ຫຼຸດ ສິບສ່ວນຮ້ອຍ (10%) ຂອງຈຳນວນຮຸ້ນທັງໝົດທີ່ມີສິດອອກສຽງ.

ພາຍຫຼັງຊື້ຮຸ້ນບາງສ່ວນແລ້ວ ເຮັດໃຫ້ອັດຕາສ່ວນການຖືຄອງຮຸ້ນຂອງຕົນເພີ່ມຂຶ້ນ ຈົນເຖິງ ອັດຕາສ່ວນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍົກເວັ້ນ ຈາກການສະເໜີຊື້ຮຸ້ນທັງໝົດ.

**ມາດຕາ 11 ການກຳນົດລາຄາສະເໜີຊື້ຮຸ້ນ**

ການກຳນົດລາຄາຮຸ້ນ ເພື່ອສະເໜີຊື້ຮຸ້ນທັງໝົດ ຫຼື ບາງສ່ວນ ຢ່າງໜ້ອຍຕ້ອງແມ່ນລາຄາຮຸ້ນສູງສຸດ ທີ່ຜູ້ສະເໜີຊື້ຮຸ້ນ ໄດ້ເຄີຍຊື້ຮຸ້ນດັ່ງກ່າວ ພາຍໃນເວລາ 90 ວັນ ນັບແຕ່ວັນສະເໜີຊື້ຮຸ້ນ ເປັນຕົ້ນໄປ ແລະ ລາຄາຕ້ອງບໍ່ຕໍ່າກວ່າລາຄາຕະຫຼາດໃນມື້ສະເໜີຊື້ຮຸ້ນ.

ກໍລະນີຜູ້ສະເໜີຊື້ຮຸ້ນ ບໍ່ເຄີຍຊື້ຮຸ້ນມາກ່ອນ ແມ່ນໃຫ້ຖືເອົາລາຄາສະເລ່ຍຖ່ວງນໍ້າໜັກຄືນຫຼັງ ພາຍໃນເວລາ 90 ວັນ ນັບແຕ່ວັນສະເໜີຊື້ຮຸ້ນ ເປັນຕົ້ນໄປ ແລະ ລາຄາຕ້ອງບໍ່ຕໍ່າກວ່າລາຄາຕະຫຼາດໃນມື້ສະເໜີຊື້ຮຸ້ນ.

**ມາດຕາ 12 ການລາຍງານການຖືຄອງຮຸ້ນ**

ຜູ້ຖືຮຸ້ນ ທີ່ຖືຄອງຮຸ້ນຂອງບໍລິສັດຈົດທະບຽນໃດໜຶ່ງ ເພີ່ມຂຶ້ນ ຫຼື ຫຼຸດລົງທຸກໆ ຫ້າສ່ວນຮ້ອຍ (5%) ຂອງຈໍານວນຮຸ້ນທັງໝົດທີ່ມີສິດອອກສຽງ ຕ້ອງລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເພື່ອຊາບ ຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຖືຄອງຮຸ້ນດັ່ງກ່າວເປັນຕົ້ນໄປ ພ້ອມທັງສະເໜີຕໍ່ ບໍລິສັດຈົດທະບຽນ ເພື່ອເປີດເຜີຍຂໍ້ມູນ. ບໍລິສັດຈົດທະບຽນ ຕ້ອງນໍາເອົາຂໍ້ມູນດັ່ງກ່າວເປີດເຜີຍຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດຕົນ ແລະ ພາຫະນະສື່ມວນຊົນອື່ນ ຕາມຄວາມເໝາະສົມ.

## ໝວດທີ 3
## ຂັ້ນຕອນການສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ

**ມາດຕາ 13 ຂັ້ນຕອນການສະເໜີຊື້ຮຸ້ນ ທັງໝົດ ແລະ ບາງສ່ວນ**

ການສະເໜີຊື້ຮຸ້ນ ທັງໝົດ ແລະ ບາງສ່ວນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເປີດເຜີຍການຖືຄອງຮຸ້ນຂອງບໍລິສັດຈົດທະບຽນ ຍົກເວັ້ນການສະເໜີຊື້ຮຸ້ນບາງສ່ວນ ແລະ ການສະເໜີຊື້ຮຸ້ນທັງໝົດ ຕາມທີ່ໄດ້ກໍານົດໄວ້ໃນ ວັກທີສອງ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
2. ຍື່ນເອກະສານ ກ່ຽວກັບການສະເໜີຊື້ຮຸ້ນ;
3. ພິຈາລະນາ ເອກະສານຂໍສະເໜີຊື້ຮຸ້ນ;
4. ເປີດເຜີຍ ເອກະສານກ່ຽວກັບການສະເໜີຊື້ຮຸ້ນ, ຄໍາເຫັນຂອງສະພາບໍລິຫານ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ;
5. ດໍາເນີນການຊື້ຮຸ້ນທັງໝົດ;
6. ການຍົກເລີກການສະເໜີຊື້ຮຸ້ນທັງໝົດ;
7. ຊໍາລະ ແລະ ໂອນຮຸ້ນ;
8. ລາຍງານຜົນການຊື້ຮຸ້ນທັງໝົດ.

**ມາດຕາ 14 ການເປີດເຜີຍການຖືຄອງຮຸ້ນຂອງຜູ້ສະເໜີຊື້ຮຸ້ນ**

ຜູ້ສະເໜີຊື້ຮຸ້ນທັງໝົດ ຕ້ອງສະເໜີຕໍ່ ບໍລິສັດຈົດທະບຽນ ເພື່ອເປີດເຜີຍການຖືຄອງຮຸ້ນຂອງຕົນ ແລະ ແຈ້ງຈຸດປະສົງໃນການຖືຄອງຮຸ້ນດັ່ງກ່າວໃຫ້ມວນຊົນຊາບ ຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ, ເວັບໄຊຂອງບໍລິສັດຕົນ ແລະ ພາຫະນະສື່ມວນຊົນອື່ນ ຕາມຄວາມເໝາະສົມ ພ້ອມທັງລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ບໍລິສັດຈົດທະບຽນ ເພື່ອຊາບ ພາຍໃນເວລາ 1 ວັນ ລັດຖະການ ນັບແຕ່ວັນຖືຄອງຮຸ້ນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເປັນຕົ້ນໄປ. ສໍາລັບຜູ້ສະເໜີຊື້ຮຸ້ນບາງສ່ວນ ບໍ່ຈໍາເປັນຕ້ອງເປີດເຜີຍການຖືຄອງຮຸ້ນຂອງຕົນກໍໄດ້.

ມາດຕາ 15 ການຍື່ນເອກະສານການສະເໜີຊື້ຮຸ້ນ

ຜູ້ສະເໜີຊື້ຮຸ້ນທັງໝົດ ຕ້ອງຍື່ນເອກະສານປະກອບການສະເໜີຊື້ຮຸ້ນ ໃນກໍລະນີທີ່ຜູ້ສະເໜີຊື້ ຖືຄອງຮຸ້ນຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລະ ໜັງສືສະເໜີຊື້ຮຸ້ນຕ້ອງມີເນື້ອໃນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອທົບທວນຄວາມ ຖືກຕ້ອງ ແລະ ສອດຄ່ອງ ຂອງເອກະສານ ພ້ອມທັງນຳສົ່ງເອກະສານດັ່ງກ່າວໃຫ້ຕະຫຼາດຫຼັກຊັບ ເພື່ອເປັນບ່ອນອີງ ແລະ ບໍລິສັດຈົດທະບຽນ ເພື່ອສະເໜີຕໍ່ ສະພາບໍລິຫານມີຄຳເຫັນຕໍ່ກັບການສະເໜີຊື້ຮຸ້ນ.

ສຳລັບ ຜູ້ສະເໜີຊື້ຮຸ້ນບາງສ່ວນ ຕ້ອງຍື່ນເອກະສານການສະເໜີຊື້ຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນ ວັກທີໜຶ່ງ ຂອງມາດຕານີ້ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາອະນຸມັດ.

ກ່ອນຍື່ນເອກະສານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະພາບໍລິຫານຂອງບໍລິສັດຈົດທະບຽນ ຕ້ອງແຕ່ງຕັ້ງທີ່ປຶກສາທາງດ້ານການເງິນອິດສະລະ ເພື່ອມີຄຳເຫັນຕໍ່ກັບການສະເໜີຊື້ຮຸ້ນດັ່ງກ່າວ ແລະ ເປັນບ່ອນອີງໃນການປະກອບຄຳເຫັນ.

ມາດຕາ 16 ເອກະສານປະກອບການສະເໜີຊື້ຮຸ້ນ

ຜູ້ສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍສະເໜີຊື້ຮຸ້ນ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຄຳເຫັນຂອງ ສະພາບໍລິຫານຂອງບໍລິສັດຈົດທະບຽນ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ ກ່ຽວກັບໜັງສືສະເໜີຊື້ຮຸ້ນ;
3. ໜັງສືສະເໜີຊື້ຮຸ້ນ;
4. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 17 ເນື້ອໃນຂອງໜັງສືສະເໜີຊື້ຮຸ້ນ

ໜັງສືສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ ຕ້ອງປະກອບມີເນື້ອໃນ ດັ່ງນີ້:

1. ຈຸດປະສົງ ແລະ ເຫດຜົນ ກ່ຽວກັບການສະເໜີຊື້ຮຸ້ນ;
2. ຊື່, ທີ່ຢູ່ ຂອງຜູ້ສະເໜີຊື້ຮຸ້ນ ກໍລະນີ ເປັນນິຕິບຸກຄົນ ຕ້ອງປະກອບມີ ຊື່, ທີ່ຢູ່, ປະເພດທຸລະກິດ, ລາຍຊື່ ຜູ້ມີອຳນາດຄວບຄຸມ, ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ (End Beneficial Shareholder), ໂຄງຮ່າງການຈັດຕັ້ງ ແລະ ມະຕິກອງປະຊຸມຜູ້ຖືຮຸ້ນກ່ຽວກັບການສະເໜີຊື້ຮຸ້ນ;
3. ຂໍ້ມູນ ກ່ຽວກັບ ລາຄາຮຸ້ນ, ວິທີການການຈັດສັນຮຸ້ນ (ກໍລະນີ ການສະເໜີຊື້ຮຸ້ນບາງສ່ວນ), ເງື່ອນໄຂການຍົກເລີກການສະເໜີຊື້ຮຸ້ນ, ໄລຍະເວລາ ແລະ ສະຖານທີ່ ຮັບຊື້ຮຸ້ນ ແລະ ມື້ສິ້ນສຸດການຮັບຊື້ຮຸ້ນ;
4. ຈຳນວນ ແລະ ສັດສ່ວນການຖືຄອງຮຸ້ນ ຂອງຜູ້ສະເໜີຊື້ຮຸ້ນ ໃນບໍລິສັດຈົດທະບຽນ (ຖ້າມີ);
5. ຂໍ້ມູນ ກ່ຽວກັບທີ່ປຶກສາທາງດ້ານການເງິນອິດສະລະ ແລະ ບໍລິສັດຫຼັກຊັບທີ່ເປັນຕົວແທນໃນການສະເໜີຊື້ຮຸ້ນ;
6. ບົດວິເຄາະກ່ຽວກັບຜົນກະທົບຂອງການສະເໜີຊື້ຮຸ້ນຕໍ່ ບໍລິສັດທະບຽນ;
7. ຂໍ້ມູນ ກ່ຽວກັບການດຳເນີນທຸລະກິດຂອງຜູ້ສະເໜີຊື້ຮຸ້ນ ແລະ ລາຍລະອຽດລາຍການທີ່ກ່ຽວພັນລະຫວ່າງພວກກ່ຽວ ກັບບໍລິສັດຈົດທະບຽນ (ຖ້າມີ);
8. ແຜນການໃນ 1 ປີຕໍ່ໜ້າ ກ່ຽວກັບການປັບປຸງ ຫຼື ຟື້ນຟູ ຫຼື ປ່ຽນແປງ ກ່ຽວກັບ ທຸລະກິດ, ຊັບສິນ, ພະນັກງານ, ການຈັດຕັ້ງ, ກົດລະບຽບຂອງບໍລິສັດ ແລະ ອື່ນໆ ຂອງບໍລິສັດຈົດທະບຽນ;

໑. ຂໍ້ມູນ ກ່ຽວກັບການຊື້ ຂາຍຮຸ້ນຂອງຜູ້ສະເໜີຊື້ຮຸ້ນ ບໍລິສັດຈົດທະບຽນ ພາຍໃນເວລາ ໑໐ ວັນ ຜ່ານມາ ນັບແຕ່ວັນຍື່ນເອກະການປະກອບກ່ຽວກັບການສະເໜີຊື້ຮຸ້ນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

## ມາດຕາ 18 ການທົບທວນ ແລະ ການພິຈາລະນາເອກະສານການສະເໜີຊື້ຮຸ້ນ

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງທົບທວນເອກະສານປະກອບການສະເໜີຊື້ຮຸ້ນທັງໝົດ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຜົນການທົບທວນ ໃຫ້ແກ່ ຜູ້ສະເໜີຊື້ຮຸ້ນ ຊາບ.

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຄົ້ນຄວ້າເອກະສານປະກອບການສະເໜີຊື້ຮຸ້ນ ບາງສ່ວນ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງແຈ້ງຜົນການອະນຸມັດໃຫ້ແກ່ ຜູ້ສະເໜີຊື້ຮຸ້ນ ຊາບ.

ໃນເວລາທົບທວນ ແລະ ພິຈາລະນາ ຫາກເຫັນວ່າມີຄວາມຈໍາເປັນ ສໍານັກງານຄະນະກາມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນ ເພີ່ມເຕີມຈາກຜູ້ສະເໜີຊື້ຮຸ້ນ ຫຼື ເຊີນຜູ້ທີ່ກ່ຽວຂ້ອງເຂົ້າມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

## ມາດຕາ 19 ການເປີດເຜີຍ ໜັງສືສະເໜີຊື້ຮຸ້ນ, ຄໍາເຫັນຂອງສະພາບໍລິຫານ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ

ຜູ້ສະເໜີຊື້ຮຸ້ນ ແລະ ບໍລິສັດຈົດທະບຽນ ຕ້ອງເປີດເຜີຍ ໜັງສືສະເໜີຊື້ຮຸ້ນ, ຄໍາເຫັນ ຂອງສະພາບໍລິຫານ ແລະ ຄໍາເຫັນຂອງທີ່ປຶກສາທາງດ້ານການເງິນອິດສະລະ ຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ, ເວັບໄຊບໍລິສັດຈົດທະບຽນ ແລະ ພາຫະນະສື່ມວນຊົນອື່ນ ຕາມຄວາມເໝາະສົມ ຕາມທີ່ລະບຽບການກ່ຽວຂ້ອງກໍານົດໄວ້ ເປັນເວລາ 5 ວັນ ຕໍ່ເນື່ອງ ນັບແຕ່ວັນໄດ້ຮັບຄໍາເຫັນຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

## ມາດຕາ 20 ການດໍາເນີນການຊື້ຮຸ້ນ

ຜູ້ສະເໜີຊື້ຮຸ້ນທັງໝົດ ແລະ ບາງສ່ວນ ຕ້ອງແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອດໍາເນີນການຊື້ຮຸ້ນແທນຕົນ ແລະ ໃຫ້ສໍາເລັດ ພາຍໃນເວລາ 30 ວັນ ນັບແຕ່ວັນທີ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ແຈ້ງຕອບ ຫຼື ອະນຸມັດ ເປັນຕົ້ນໄປ.

ສໍາລັບ ການສະເໜີຊື້ຮຸ້ນບາງສ່ວນ ພາຍຫຼັງສິ້ນສຸດໄລຍະເວລາຮັບຊື້ຮຸ້ນ ກໍລະນີມີຜູ້ຖືຮຸ້ນຕົກລົງຂາຍຮຸ້ນ ເກີນຈໍານວນທີ່ຜູ້ສະເໜີຊື້ຮຸ້ນໄດ້ຮັບອະນຸຍາດຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ການຈັດສັນຮຸ້ນດັ່ງກ່າວໃຫ້ຜູ້ຖືຮຸ້ນຕ້ອງດໍາເນີນການຕາມວິທີສະເລ່ຍຖ່ວງນໍ້າໜັກ ໃຫ້ຜູ້ຖືຮຸ້ນທັງໝົດທີ່ຕົກລົງຂາຍຮຸ້ນ.

ກໍລະນີ ການສະເໜີຊື້ຮຸ້ນຂອງ ບໍລິສັດຈົດທະບຽນ ເປັນສາເຫດໃຫ້ບໍລິສັດຈົດທະບຽນຂາດສະຖານະພາບເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຜູ້ສະເໜີຊື້ຮຸ້ນ ຕ້ອງສະເໜີຊື້ຮຸ້ນສ່ວນທີ່ເຫຼືອທັງໝົດຈາກຜູ້ຖືຮຸ້ນ ໃນລາຄາດຽວກັນ ເພີ່ມອີກ 10 ວັນ ລັດຖະການ ນັບແຕ່ວັນສິ້ນສຸດການສະເໜີຊື້ຮຸ້ນ ເປັນຕົ້ນໄປ.

## ມາດຕາ 21 ການຍົກເລີກການສະເໜີຊື້ຮຸ້ນ

ຜູ້ສະເໜີຊື້ຮຸ້ນ ທັງໝົດ ແລະ ບາງສ່ວນ ສາມາດຍົກເລີກການສະເໜີຊື້ຮຸ້ນໄດ້ ໃນກໍລະນີ ດັ່ງນີ້:

1. ໃນໄລຍະຂອງການດໍາເນີນການສະເໜີຊື້ຮຸ້ນ ຫາກມີເຫດການໃດໜຶ່ງເກີດຂຶ້ນ ຊຶ່ງອາດສ້າງຄວາມເສຍຫາຍຕໍ່ຖານະການເງິນ ແລະ ຜົນການດໍາເນີນທຸລະກິດ ຂອງບໍລິສັດຈົດທະບຽນ;

2. ກໍລະນີອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ຜູ້ສະເໜີຊື້ຮຸ້ນ ຕ້ອງຍື່ນໜັງສືຂໍຍົກເລີກຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພ້ອມທັງແຈ້ງຕໍ່ ຕະຫຼາດຫຼັກຊັບ ແລະ ບໍລິສັດຈົດທະບຽນ ເພື່ອຊາບ.

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາໜັງສືສະເໜີຂໍຍົກເລີກໃຫ້ແກ່ຜູ້ຮ້ອງຂໍພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ໄດ້ຮັບໜັງສືສະເໜີຂໍຍົກເລີກ ເປັນຕົ້ນໄປ.

ຜູ້ສະເໜີຊື້ຮຸ້ນ ຕ້ອງສະເໜີຕໍ່ ບໍລິສັດຈົດທະບຽນ ເພື່ອເປີດເຜີຍຂໍ້ມູນກ່ຽວກັບການຍົກເລີກການສະເໜີຊື້ຮຸ້ນ ໃຫ້ມວນຊົນຮັບຊາບ ຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນເວລາ 1 ວັນ ລັດຖະການ ນັບແຕ່ວັນໄດ້ຮັບການເຫັນດີຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

## ມາດຕາ 22 ການຊໍາລະ ແລະ ການໂອນຮຸ້ນ

ພາຍຫຼັງບໍລິສັດຫຼັກຊັບທີ່ເປັນຕົວແທນໃນການສະເໜີຊື້ຮຸ້ນ ໄດ້ຮັບແບບຟອມການສະເໜີຂາຍຮຸ້ນຈາກຜູ້ຖືຮຸ້ນ ຕ້ອງສະເໜີຫາ ບໍລິສັດຫຼັກຊັບອື່ນ ທີ່ມີຜູ້ຖືຮຸ້ນໃນບໍລິສັດຈົດທະບຽນເປີດບັນຊີຫຼັກຊັບນໍາເພື່ອດໍາເນີນການລ໋ອກຮຸ້ນຂອງຜູ້ຖືຮຸ້ນດັ່ງກ່າວ.

ພາຍຫຼັງສິ້ນສຸດໄລຍະເວລາຮັບຊື້ຮຸ້ນ 1 ວັນ ລັດຖະການ ບໍລິສັດຫຼັກຊັບດັ່ງກ່າວ ຕ້ອງສະເໜີຕໍ່ ຕະຫຼາດຫຼັກຊັບ ເພື່ອດໍາເນີນການຊໍາລະ ແລະ ໂອນຮຸ້ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 23 ການລາຍງານຜົນການຊື້ຮຸ້ນ

ຜູ້ສະເໜີຊື້ຮຸ້ນທັງໝົດ ຕ້ອງລາຍງານຜົນການຊື້ຮຸ້ນຂອງບໍລິສັດຈົດທະບຽນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນສິ້ນສຸດການຊື້ຮຸ້ນ ເປັນຕົ້ນໄປ ພ້ອມທັງສະເໜີຕໍ່ ບໍລິສັດຈົດທະບຽນດັ່ງກ່າວ ເພື່ອນໍາເອົາຂໍ້ມູນຜົນການສະເໜີຊື້ຮຸ້ນ ເປີດເຜີຍ ຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນເວລາ 5 ວັນ ລັດຖະການ.

ສໍາລັບ ການສະເໜີຊື້ຮຸ້ນບາງສ່ວນ ຕ້ອງລາຍງານຜົນການຊື້ຮຸ້ນຂອງບໍລິສັດຈົດທະບຽນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນສິ້ນສຸດການຊື້ຮຸ້ນ ເປັນຕົ້ນໄປ. ພາຍຫຼັງໄດ້ຮັບການຢັ້ງຢືນຜົນການຊື້ຮຸ້ນດັ່ງກ່າວຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ບໍລິສັດຫຼັກຊັບ ທີ່ເຮັດໜ້າທີ່ໃນການສະເໜີຊື້ຮຸ້ນ ຕ້ອງດໍາເນີນການຊໍາລະ ແລະ ໂອນຮຸ້ນ ຕາມເນື້ອໃນທີ່ໄດ້ກໍານົດໄວ້ໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້. ພ້ອມທັງເປີດເຜີຍຜົນການສະເໜີຊື້ຮຸ້ນດັ່ງກ່າວ ໃຫ້ມວນຊົນຮັບຊາບ ຜ່ານຊ່ອງທາງລະບົບການເປີດເຜີຍຂໍ້ມູນຂອງຕະຫຼາດຫຼັກຊັບ ພາຍໃນເວລາ 5 ວັນ ລັດຖະການ.

## ມາດຕາ 24 ການຍົກເວັ້ນການສະເໜີຊື້ຮຸ້ນທັງໝົດ

ຜູ້ສະເໜີຊື້ຮຸ້ນທັງໝົດ ທີ່ບໍ່ມີຈຸດປະສົງຄອບຄອງກິດຈະການ ຈະໄດ້ຮັບການຍົກເວັ້ນການຊື້ຮຸ້ນທັງໝົດ ໃນກໍລະນີ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ໄດ້ຮັບຮຸ້ນຈາກການສືບທອດມູນມໍລະດົກ;

2. ໄດ້ຮັບຮຸ້ນຈາກການໄດ້ຮັບເງິນປັນຜົນເປັນຮຸ້ນ;

3. ໄດ້ຮັບຮຸ້ນຈາກຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;

4. ໄດ້ຮັບຮຸ້ນຈາກການຊື້ຮຸ້ນທີ່ອອກຈຳໜ່າຍໃຫ້ແກ່ມວນຊົນຄັ້ງທຳອິດ;

5. ໄດ້ຮັບຮຸ້ນຈາກການຄໍ້າປະກັນການອອກຈຳໜ່າຍຮຸ້ນ;

6. ໄດ້ຮັບຮຸ້ນຈາກການຊື້ ຫຼື ໂອນຮຸ້ນ ຈາກການຟື້ນຟູກິດຈະການຂອງບໍລິສັດຈົດທະບຽນ;

7. ໄດ້ຮັບຮຸ້ນຈາກການຫັນໜີ້ເປັນທຶນ;

8. ໄດ້ຮັບຮຸ້ນຈາກ ກໍລະນີອື່ນ ຕາມການກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ຜູ້ສະເໜີຊື້ຮຸ້ນທັງໝົດ ທີ່ບໍ່ມີຈຸດປະສົງຄອບຄອງກິດຈະການ ຕ້ອງສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອພິຈາລະນາຍົກເວັ້ນການສະເໜີຊື້ຮຸ້ນທັງໝົດເສຍກ່ອນ ກ່ອນໄດ້ຮັບຮຸ້ນຕົວຈິງ ພາຍໃນເວລາ 5 ວັນ ລັດຖະການ.

## ໝວດທີ 4
## ຄ່າບໍລິການ ແລະ ຂໍ້ຫ້າມ

### ມາດຕາ 25 ຄ່າບໍລິການ

ຜູ້ສະເໜີຊື້ຮຸ້ນ ຕ້ອງເສຍຄ່າບໍລິການ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງຂໍສະເໜີຊື້ຮຸ້ນ ຈຳນວນ 10.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນມື້ຍື່ນເອກະສານປະກອບການສະເໜີຊື້ຮຸ້ນ;

2. ຄ່າຄົ້ນຄວ້າການສະເໜີຊື້ຮຸ້ນ ຈຳນວນ ສູນຈຸດສູນໜຶ່ງສ່ວນຮ້ອຍ (0,01%) ຂອງມູນຄ່າທີ່ສະເໜີຊື້ຮຸ້ນ.

### ມາດຕາ 26 ຂໍ້ຫ້າມ

ຫ້າມບໍລິສັດຫຼັກຊັບ ທີ່ເຮັດໜ້າທີ່ເປັນທີ່ປຶກສາທາງດ້ານການເງິນອິດສະລະ ແລ້ວມາເປັນຕົວແທນໃນການສະເໜີຊື້ຮຸ້ນແທນຜູ້ສະເໜີຊື້ຮຸ້ນ.

ຫ້າມຜູ້ສະເໜີຊື້ຮຸ້ນ ທັງໝົດ ແລະ ບາງສ່ວນ ມີພຶດຕິກຳໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ບໍ່ລາຍງານ ຫຼື ບໍ່ເປີດເຜີຍ ກ່ຽວກັບອັດຕາສ່ວນການຖືຄອງຮຸ້ນ ໃນບໍລິສັດຈົດທະບຽນຕາມອັດຕາສ່ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

2. ຜູ້ສະເໜີຊື້ຮຸ້ນ ຊື້ຮຸ້ນກ່ອນໄດ້ຮັບການແຈ້ງຕອບ ຫຼື ໄດ້ຮັບອະນຸມັດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

3. ຊື້ຮຸ້ນເກີນຈຳນວນ ທີ່ໄດ້ຮັບອະນຸມັດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສຳລັບຜູ້ສະເໜີຊື້ຮຸ້ນບາງສ່ວນ;

4. ສະເໜີຊື້ຮຸ້ນຈາກຜູ້ຖືຮຸ້ນ ຫຼື ກຸ່ມຜູ້ຖືຮຸ້ນ ສະເພາະໃດໜຶ່ງ;

5. ຜູ້ສະເໜີຊື້ຮຸ້ນ ຫຼື ຮ່ວມກັບຜູ້ອື່ນ ຫຼື ພາກສ່ວນອື່ນ ເພື່ອປັ່ນຕະຫຼາດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ສະເໜີຊື້ຮຸ້ນ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງກັບການຄອບຄອງກິດຈະການຂອງບໍລິສັດຈົດທະບຽນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມການກຳນົດໄວ້ໃນລະບຽບສະເພາະ.

### ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ

ຜູ້ສະເໜີຊື້ຮຸ້ນ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຄອບຄອງກິດຈະການຂອງບໍລິສັດຈົດທະບຽນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ສໍາລັບມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທໍາອິດ ທີ່ມີລັກສະນະເບົາ ເປັນຕົ້ນ ບໍ່ໃຫ້ການຮ່ວມມືກັບ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນກ່ຽວຂ້ອງ ແລະ ກໍລະນີອື່ນທີ່ການລະເມີດສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;
2. ບໍ່ລາຍງານການຖືຄອງຮຸ້ນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ເປີດເຜີຍ ໜັງສືສະເໜີຊື້ຮຸ້ນ, ຄໍາເຫັນຂອງສະພາບໍລິຫານ ແລະ ທີ່ປຶກສາທາງດ້ານການເງິນອິດສະລະ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 19 ຂອງຂໍ້ຕົກລົງສະບັບນີ້;
4. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;
5. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 26 ຂອງຂໍ້ຕົກລົງສະບັບນີ້;
6. ກໍລະນີອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ສໍາລັບມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະ ດັ່ງນີ້:

1. ເປັນການລະເມີດຄັ້ງທໍາອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດຄວາມເສຍຫາຍເກີນ 1.000.000 ກີບ, ມີເຈດຕະນາໃນການລະເມີດ, ບໍ່ສະໝັກໃຈ ແຈ້ງ ຫຼື ລາຍງານການລະເມີດຂອງຕົນ, ບໍ່ໃຫ້ການຮ່ວມມືກ່ຽວກັບການລະເມີດຂອງຕົນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຈະຖືກປັບໃໝ ຈໍານວນ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;
2. ຜູ້ສະເໜີຊື້ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 26 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 15.000.000 ຫາ 30.000.000 ກີບ.
3. ລາຍງານບໍ່ຖືກຕ້ອງ ຄັ້ງທໍາອິດຈະແຈ້ງໃຫ້ປັບປຸງຄືນໃຫ້ຖືກຕ້ອງ ກໍລະນີບໍ່ປັບປຸງຄືນ ຈະຖືກຈະຖືກປັບໃໝ 30.000.000 ກີບ ຫາ 50.000.000 ກີບ;
4. ບໍ່ລາຍງານການຖືຄອງຮຸ້ນ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ພາຍຫຼັງຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ຈະຖືກປັບໃໝ 50.000.000 ກີບ.

ສຳລັບມາດຕະການເພີ່ມເຕີມ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະ ແລະ/ຫຼື ຍົກເລີກ ກ່ຽວກັບການສະເໜີຊື້ຮຸ້ນ ບາງສ່ວນ ຫຼື ທັງໝົດ;

3. ເຜີຍແຜ່ ກ່ຽວກັບການລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊ ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຈົດທະບຽນ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຄອບຄອງກິດຈະການຂອງບໍລິສັດຈົດທະບຽນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ຄະນະກຳມະການຄຸ້ມຄອງ ... ປະທານ

ສອນໄຊ ສິພັນດອນ